ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ

ເລກທີ 1019 /ກຜທ
ນະຄອນຫຼວງວຽງຈັນ, ວັນທີ 23 ພຶດສະພາ 2022

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ

- ອີງຕາມດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 636/ນຍ, ລົງວັນທີ 26 ພະຈິກ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຜນການ ແລະ ການລົງທຶນ;
- ອີງຕາມດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 684/ນຍ, ລົງວັນທີ 27 ທັນວາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຮ່ວມມືທະວິພາຄີ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ສສ ຫວຽດນາມ;
- ອີງຕາມ ໜັງສືສະເໜີ ຂອງ ຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ສະບັບເລກທີ: 096/ກຜທ.ຫຄຮລ-ຫວ, ລົງວັນທີ 25 ເມສາ 2022.
- ອີງຕາມການຄົ້ນຄ້ວາ ແລະ ສະເໜີ ຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ521/ກຜທ.ກຈພ, ລົງວັນທີ16 ພຶດສະພາ 2022.

## ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ອອກຂໍ້ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ແນໃສ່ຈັດຕັ້ງປະຕິບັດວຽກງານຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການປະສານງານ, ຕິດຕາມ, ຊຸກຍູ້, ສົ່ງເສີມການຮ່ວມມື ລາວ-ຫວຽດນາມ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ກັບ ສສ ຫວຽດນາມ ໃຫ້ມີປະສິດທິຜົນສູງ.



สแกนด้วย CamScanner

**ມາດຕາ 2: ທີ່ຕັ້ງ ແລະ ພາລະບົດບາດ**

ຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ມີຊື່ຫຍໍ້ເປັນພາສາລາວວ່າ: **"ຫຄຮລ-ຫວ"** ແລະ ຂຽນຊື່ເປັນພາສາອັງກິດວ່າ: **LAO-Vietnam Cooperation Committee Office ໂດຍມີຊື່ຫຍໍ້ວ່າ "L-VCCO"** ແມ່ນໂຄງປະກອບໜຶ່ງໃນກົງຈັກຂອງກະຊວງແຜນການ ແລະ ການລົງທຶນ, ມີຖານະທຽບເທົ່າກົມ, ພາຍໃຕ້ການຊີ້ນຳໂດຍກົງຂອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ທີ່ເປັນປະທານຄະນະກຳມະການຮ່ວມມື ລາວ-ຫວຽດນາມ, ມີຮອງປະທານຄະນະກຳມະການຮ່ວມມືລາວ-ຫວຽດນາມເປັນຜູ້ປະຈຳການ ເຊິ່ງມີຖານະທຽບເທົ່າຮອງລັດຖະມົນຕີ. ຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ມີພາລະບົດບາດເປັນເສນາທິການໃຫ້ແກ່ສູນກາງພັກ, ລັດຖະບານ, ກະຊວງ ແຜນການ ແລະ ການລົງທຶນ ກໍ່ຄືຄະນະກຳມະການຮ່ວມມື ລາວ-ຫວຽດນາມ ໃນການຄຸ້ມຄອງລວມສູນ ທຸກໆບັນຫາທີ່ມີການພົວພັນຮ່ວມມື ແລະລົງທຶນ ກັບ ສສ ຫວຽດນາມ; ຄົ້ນຄ້ວາ ກ່ຽວກັບ ກົນໄກ, ນະໂຍບາຍ, ຍຸດທະສາດ ແລະ ການຮ່ວມມືທະວິພາຄີ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ແນໃສ່ຍາດແຍ່ງການຊ່ວຍເຫຼືອ-ກູ້ຢືມ ຈາກ ສສ ຫວຽດນາມ ຢ່າງມີຈຸດສຸມ ແລະ ມີປະສິດທິຜົນ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ໃນແຕ່ລະໄລຍະ;

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3: ໜ້າທີ່**

1. ຄົ້ນຄວ້າຮ່າງຍຸດທະສາດ, ນະໂຍບາຍ, ແຜນການ, ແຜນງານ, ໂຄງການ ແລະ ກົນໄກການຈັດຕັ້ງປະຕິບັດວຽກງານການຮ່ວມມືຮອບດ້ານ ກັບ ສສ ຫວຽດນາມ ໃນແຕ່ລະໄລຍະ ໂດຍປະສານສົມທົບກັບບັນດາກະຊວງ, ອົງການຈັດຕັ້ງຂັ້ນສູນກາງ, ຂະແໜງການ, ທ້ອງຖິ່ນ ແລະ ພາກທຸລະກິດ ເພື່ອນຳສະເໜີຂັ້ນເທິງພິຈາລະນາຮັບຮອງ ແລະນຳໄປປຶກສາຫາລື, ເຈລະຈາກັບຝ່າຍຫວຽດນາມ;
2. ເກັບກຳສະພາບ ແລະສັງລວມຂໍ້ມູນຮອບດ້ານ ເພື່ອສ້າງແຜນການຮ່ວມມືທະວິພາຄີ ປະຈຳປີ, 05 ປີ, 10 ປີ ກັບ ສສ ຫວຽດນາມ ໃຫ້ແທດເໝາະກັບທ່າແຮງ ແລະເງື່ອນໄຂຄວາມສາມາດຕົວຈິງ ຂອງແຕ່ລະຝ່າຍ;
3. ເປັນກອງເລຂາ ໃນການຈັດກອງປະຊຸມປະຈຳປີ, ກອງປະຊຸມກາງສະໄໝ ຫຼື ການພົບປະແບບວິສາມັນ ຂອງສອງຄະນະກຳມະການຮ່ວມມື ລາວ-ຫວຽດນາມ ແລະ ຫວຽດນາມ-ລາວ ໃນແຕ່ລະໄລຍະ;
4. ຈັດຕັ້ງຜັນຂະຫຍາຍຍຸດທະສາດ, ບັນດາສັນຍາ, ຂໍ້ຕົກລົງ, ກົດຈະການ ແລະ ໂຄງການຮ່ວມມືຕ່າງໆ ທີ່ສອງກົມການເມືອງ ແລະລັດຖະບານສອງປະເທດ ໄດ້ຕົກລົງ ແລະລົງນາມຮ່ວມກັນ ໃຫ້ໄດ້ຮັບໝາກຜົນຕົວຈິງ;
5. ເປັນໃຈກາງປະສານງານດ້ານການຮ່ວມມື ແລະ ຕິດຕາມ, ກວດກາ ແລະ ຊຸກຍູ້ສົ່ງເສີມການລົງທຶນ ໃນຂົງເຂດຕ່າງໆທີ່ສອງຝ່າຍ ມີເງື່ອນໄຂ ແລະມີຄວາມສົນໃຈ ບົນຫຼັກການສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ, ສອດຄ່ອງກັບກົດໝາຍຂອງແຕ່ລະປະເທດ, ລະບຽບການສາກົນ ແລະ ຈິດໃຈເພື່ອນສະໜາຍ.



สแกนด้วย CamScanner

6. ປະສານສົມທົບກັບກົມສົ່ງເສີມການລົງທຶນ ເພື່ອເຂົ້າຮ່ວມເລີ່ມແຕ່ຫົວທີ ໃນການຂໍອະນຸຍາດລົງທຶນຢູ່ ສປປ ລາວ ຂອງນັກລົງທຶນຫວຽດນາມ ພ້ອມທັງແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການຈັດຕັ້ງປະຕິບັດໂຄງການລົງທຶນ ຂອງ ຫວຽດນາມ ຢູ່ ສປປ ລາວ ເປັນປົກກະຕິ;
7. ເປັນໃຈກາງປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ໃນການສ້າງເງື່ອນໄຂຂໍ້ສະດວກ, ແກ້ໄຂບັນຫາຕ່າງໆ ທີ່ພົວພັນເຖິງການຮ່ວມມື-ລົງທຶນ ຂອງ ສສ ຫວຽດນາມ ຢູ່ ລາວ ແລະ ຂອງ ລາວ ຢູ່ ສສ ຫວຽດນາມ ເພື່ອໃຫ້ໄດ້ຮັບປະສິດທິຜົນສູງສຸດ;
8. ພົວພັນປະສານສົມທົບໂດຍກົງກັບພາກສ່ວນກ່ຽວຂ້ອງຂອງຝ່າຍ ລາວ ແລະ ຝ່າຍຫວຽດນາມ ໂດຍສະເພາະແມ່ນ: ຄະນະກຳມະການຮ່ວມມື ຫວຽດນາມ-ລາວ, ສະຖານທູດ ສສ ຫວຽດນາມ ປະຈຳ ສປປ ລາວ, ສະຖານທູດ ສປປ ລາວ ປະຈຳ ສສ ຫວຽດນາມ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງຢ່າງເປັນປະຈຳ ເພື່ອເປັນສາຫາລືຊຸກຍູ້ການຈັດຕັ້ງປະຕິບັດສັນຍາ, ຂໍ້ຕົກລົງຕ່າງໆທີ່ໄດ້ລົງນາມຮ່ວມກັນ ໃຫ້ເປັນ ຮູບປະທຳ;
9. ຄົ້ນຄວ້າ ແລະ ຢັ້ງຢືນການຂໍອະນຸມັດຮັບເອົາຊ່ຽວຊານ, ວິຊາການ, ອາສາສະໝັກ; ການນຳເຂົ້າ ແລະ ຍົກເວັ້ນພາສີອາກອນ ສຳລັບວັດຖຸ-ອຸປະກອນ ແລະງົບປະມານສົມທົບ ໃຫ້ແກ່ໂຄງການຊ່ວຍເຫຼືອຈາກ ສສ ຫວຽດນາມ ເພື່ອໃຫ້ບັນດາອົງການກ່ຽວຂ້ອງ ພິຈາລະນາອະນຸມັດ;
10. ຄົ້ນຄວ້າ, ສ້າງ ແລະ ປັບປຸງບັນດາເອກະສານນິຕິກຳ ທີ່ກ່ຽວຂ້ອງໃນການຄຸ້ມຄອງ, ຕິດຕາມ ແລະ ແນະນຳການຈັດຕັ້ງປະຕິບັດວຽກງານການຮ່ວມມືຮອບດ້ານ ລາວ-ຫວຽດນາມ;
11. ສ້າງແຜນ ແລະ ສະຫຼຸບສະພາບການເຄື່ອນໄຫວ ຂອງຄະນະກຳມະການຮ່ວມມືທະວິພາຄີ ລາວ-ຫວຽດນາມ ແລະ ຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ປະຈຳເດືອນ, ປະຈຳໄຕມາດ, 6 ເດືອນ ແລະ ປະຈຳປີ;
12. ຄຸ້ມຄອງບັນດາເອກະສານ, ການເງິນ, ວັດຖຸອຸປະກອນ, ພາຫະນະ ແລະ ເຄື່ອງໃຊ້ຫ້ອງການ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ຖືກຕ້ອງຕາມຂໍ້ກຳນົດ ແລະລະບຽບການຂອງລັດ.
13. ຄົ້ນຄ້ວາ ແລະສະເໜີວຽກງານຄຸ້ມຄອງ ແລະກໍ່ສ້າງພະນັກງານ: ຂຶ້ນແຜນຄວາມຕ້ອງການພະນັກງານໃໝ່, ສ້າງແຜນກໍ່ສ້າງພະນັກງານ, ປະເມີນລັດຖະກອນ, ເກັບກຳສະຖິຕິ ແລະຊີວະປະຫວັດພະນັກງານ-ສະມາຊິກພັກ, ຄົ້ນຄ້ວາປັບປຸງການຈັດຕັ້ງ ແລະຂຽນກຳນົດຕຳແໜ່ງງານຂອງຫ້ອງການ;
14. ຄົ້ນຄ້ວາ, ສະເໜີການປະຕິບັດຕໍ່ນະໂຍບາຍຕໍ່ພະນັກງານເຊັ່ນ: ນະໂຍບາຍຍ້ອງຍໍ, ນະໂຍບາຍເລື່ອນຊັ້ນ, ດັດແກ້ຊັ້ນ-ຂັ້ນເງິນເດືອນ, ບຳເນັດ, ບຳນານ ແລະ ລາພັກຕ່າງໆ. ພ້ອມດຽວກັນນັ້ນ ກໍ່ເຮັດໜ້າທີ່ປ້ອງກັນພັກ ແລະ ພະນັກງານ ບໍ່ໃຫ້ເຄື່ອນໄຫວຜິດກົດລະບຽບພັກ, ກົດໝາຍຕ່າງໆຂອງລັດ, ກົດລະບຽບຂອງກົມກອງ ແລະ ກະຊວງແຜນການ ແລະ ການລົງທຶນ ວາງອອກ;
15. ສະຫລຸບ, ລາຍງານສະພາບການເຄື່ອນໄຫວ ຂອງ ການຈັດຕັ້ງ, ພະນັກງານ-ລັດຖະກອນ ທີ່ ຂຶ້ນກັບການຄຸ້ມຄອງຂອງຕົນ ໃຫ້ຂັ້ນເທິງໄດ້ຮັບຊາບຢ່າງເປັນປົກກະຕິ ແລະປະຕິບັດໜ້າທີ່ອື່ນໆ ທີ່ ຄະນະກຳມະການຮ່ວມມື ລາວ-ຫວຽດນາມ ແລະກະຊວງແຜນການ ແລະ ການລົງທຶນມອບໝາຍໃຫ້.

**ມາດຕາ 4: ຂອບເຂດສິດ.**

1. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ເປັນສາຫາລືຮ່ວມກັບບັນດາກະຊວງ, ອົງການທຽບເທົ່າ, ອົງການຈັດຕັ້ງມະຫາຊົນ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານຮ່ວມມືຮອບດ້ານ ລາວ-ຫວຽດນາມ;



สแกนด้วย CamScanner

2. ພົວພັນ, ເປີກສາຫາລື, ເຈລະຈາ ຮ່ວມກັບຝ່າຍຫວຽດນາມ ກ່ຽວກັບວຽກງານຮ່ວມມື ຮອບດ້ານ ລາວ-ຫວຽດນາມ;
3. ເຂົ້າຮ່ວມໃນການຄົ້ນຄວ້າ, ຕິດຕາມ, ກວດກາ ແລະ ປະເມີນຜົນບັນດາກິດຈະການໂຄງການຮ່ວມມື, ຊ່ວຍເຫຼືອ ແລະ ໂຄງການລົງທຶນ ຂອງ ສສ ຫວຽດນາມ ຢູ່ ສປປ ລາວ;
4. ເຊັນເອກະສານເຖິງພາກສ່ວນກ່ຽວຂ້ອງ ຂອງຝ່າຍລາວ ແລະ ຫວຽດນາມ ໂດຍກົງ ກ່ຽວກັບການປະຕິບັດວຽກງານຮ່ວມມືຮອບດ້ານ ລາວ-ຫວຽດນາມ ໂດຍການເຫັນດີ ຂອງປະທານຄະນະກຳມະການຮ່ວມມື ລາວ-ຫວຽດນາມ ເຊັ່ນ: ການຢັ້ງຢືນຊ່ຽວຊານ, ບັນຊີການນຳເຂົ້າວັດຖຸ-ອຸປະກອນ ຮັບໃຊ້ໂຄງການ, ການສະເໜີງົບປະມານລົມທຶບ ແລະ ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ;
5. ຈັດຕັ້ງປະຕິບັດບັນດາໂຄງການບັນດາໂຄງການຊ່ວຍເຫຼືອ ໃນຂົງເຂດຄວາມຮັບຜິດຊອບຂອງຕົນຕາມການມອບໝາຍ;
6. ຮຽກເຊີນບັນດາພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໂຄງການຮ່ວມມື, ຊ່ວຍເຫຼືອລ້າຈາກ ສສ ຫວຽດນາມ ເພື່ອລາຍງານສະພາບການຈັດຕັ້ງປະຕິບັດ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນ;
7. ຮຽກເຊີນບັນດາວິສາຫະກິດ ທີ່ກ່ຽວຂ້ອງກັບການລົງທຶນ ຂອງຫວຽດນາມ ຢູ່ ສປປ ລາວ ເພື່ອລາຍງານສະພາບການຈັດຕັ້ງປະຕິບັດ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນ;
8. ສະເໜີການຍ້ອງຍໍ, ປະດັບຫຼຽນຈາກລັດຖະບານສອງປະເທດ ລາວ-ຫວຽດນາມ ໃຫ້ແກ່ບຸກຄົນ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ວິສະຫະກິດຫວຽດນາມ ທີ່ມີຜົນງານດີເດັ່ນ ເຊິ່ງໄດ້ປະກອບສ່ວນອັນສຳຄັນ ເຂົ້າໃນການຊຸກຍູ້ແກ່ການພົວພັນຮ່ວມມື-ລົງທຶນ ລະຫວ່າງສອງປະເທດ;
9. ສະເໜີຂັ້ນເທິງ ປະຕິບັດນະໂຍບາຍ ແລະ ລະບຽບວິໄນ ຕໍ່ພະນັກງານ, ລັດຖະກອນ ທີ່ສັງກັດໃນຄວາມຮັບຜິດຊອບຂອງຕົນເຊັ່ນ: ການຍ້ອງຍໍ, ຍົກລະດັບ, ເລື່ອນຊັ້ນ, ຍົກຍ້າຍ, ປົດຕຳແໜ່ງ ຫຼື ປະຕິບັດວິໄນອື່ນໆ;
10. ປະຕິບັດວຽກງານອື່ນໆທີ່ກ່ຽວຂ້ອງ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5: ໂຄງປະກອບກົງຈັກ :**

ໂຄງປະກອບກົງຈັກຂອງຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ:

1. ພະແນກ ຄົ້ນຄວ້າສັງລວມ;
2. ພະແນກ ຮ່ວມມືດ້ານການເມືອງ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.
3. ພະແນກ ຮ່ວມມືດ້ານເສດຖະກິດ ແລະ ການລົງທຶນ;
4. ພະແນກ ຮ່ວມມືດ້ານການສຶກສາ ແລະ ວັດທະນະທຳ-ສັງຄົມ.

**ມາດຕາ 6: ໂຄງປະກອບບຸກຄະລາກອນ**

ບຸກຄະລາກອນຂອງ ຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ປະກອບມີ:

1. ຫົວໜ້າຫ້ອງການ 01 ທ່ານ (ທຽບເທົ່າຫົວໜ້າກົມ) ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຈາກນາຍົກລັດຖະມົນຕີ ຕາມກົດໝາຍ ແລະ ລະບຽບການ; ມີຄວາມຮັບຜິດຊອບລາຍງານໜ້າວຽກ ຕໍ່



สแกนด้วย CamScanner

ລັດຖະມົນຕີກະຊວງແຜນການ ແລະການລົງທຶນ, ປະທານຄະນະກຳມະການຮ່ວມມື ລາວ-ຫວຽດນາມ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງຕ່າງໆ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້; ຫົວໜ້າຫ້ອງການເປັນຜູ້ລົງລາຍເຊັນເອກະສານຂອງຫ້ອງການ, ຊີ້ນຳລວມທຸກວຽກງານຂອງຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ, ລົງເລິກຊີ້ນຳພະແນກໃດໜຶ່ງຕາມຄວາມຮຽກຮ້ອງຕ້ອງການຕົວຈິງຂອງວຽກງານ;

2. ຮອງຫົວໜ້າຫ້ອງການຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍາຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງແຜນການ ແລະການລົງທຶນ ຕາມກົດໝາຍ ແລະ ບະບຽບການ, ຊ່ວຍຫົວໜ້າຫ້ອງການໃນການຊີ້ນຳວຽກງານ ແລະ ລົງເລິກຮັບຜິດຊອບວຽກງານພະແນກໃດໜຶ່ງຕາມການມອບໝາຍຂອງຫົວໜ້າຫ້ອງການ, ມີຄວາມຮັບຜິດຊອບຕໍ່ຫົວໜ້າຫ້ອງການ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງຕ່າງໆ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້;

3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ຕາມກົດໝາຍ ແລະ ລະບຽບການ; ຊ່ວຍຮອງຫົວໜ້າຫ້ອງການ ທີ່ຊີ້ນຳພະແນກກ່ຽວຂ້ອງໃນການຕິດຕາມ, ກວດກາວຽກງານວິຊາສະເພາະ ທີ່ໄດ້ຮັບມອບໝາຍ; ມີຄວາມຮັບຜິດຊອບຕໍ່ຂັ້ນເທິງ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງຕ່າງໆ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້.

## ໝວດທີ IV

## ໜ້າທີ່ຂອງແຕ່ລະພະແນກ

**ມາດຕາ 7: ໜ້າທີ່ຂອງພະແນກຄົ້ນຄ້ວາສັງລວມ.**

1. ສ້າງແຜນງົບປະມານ ເພື່ອຮັບໃຊ້ໃຫ້ແກ່ການຈັດກອງປະຊຸມປະຈຳປີ, ກອງປະຊຸມກາງສະໄໝ ຫຼື ການພົບປະແບບວິສາມັນ ຂອງສອງຄະນະກຳມະການຮ່ວມມື, ກອງປະຊຸມສຳມະນາ, ຝຶກອົບຮົມ, ປາຖະກະຖາ, ແລກປ່ຽນບົດຮຽນ; ແຜນລົງເຄື່ອນໄຫວວຽກງານຕ່າງໆຢູ່ອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ;
2. ປະສານສົມທົບກັບບັນດາພະແນກພາຍໃນຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ເພື່ອສ້າງແຜນການຮ່ວມມືທະວີພາຄີ ປະຈຳປີ, 05 ປີ, 10 ປີ ກັບ ສສ ຫວຽດນາມ;
3. ຂຶ້ນແຜນງົບປະມານ (ສ້ອມແປງພາຫະນະ, ອາຄານ, ຊື້ໃໝ່, ອຸປະກອນຮັບໃຊ້ຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ, ຮັບໃຊ້ວິຊາສະເພາະ) ແຕ່ລະໄລຍະ ແລະ ຄຸ້ມຄອງຊັບສົມບັດຕ່າງໆ ຂອງຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ;
4. ສະຫຼຸບສັງລວມວຽກງານວິຊາສະເພາະລວມສູນ, ວຽກງານບໍລິຫານ-ການເງິນ ຂອງຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ປະຈຳອາທິດ, ເດືອນ, ປີ ພ້ອມທັງຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດແຜນການດັ່ງກ່າວ ໃຫ້ມີປະສິດທິຜົນ;
5. ຮັບຜິດຊອບວຽກງານບໍລິຫານທົ່ວໄປ: ວຽກງານຂາເຂົ້າ-ຂາອອກ; ສຳເນົາ, ສັງລວມຕິດຕາມເອກະສານ, ເວັບໄຊ໌, ໄອທີ, ວຽກງານເລຂານຸການ, ພິທີການ ແລະ ຄົ້ນຄ້ວານິຕິກຳຕ່າງໆ; ພົວພັນປະສານສົມທົບກັບ ຫ້ອງການ, ກົມກອງ, ພະແນກການຕ່າງໆ ຂອງບັນດາກະຊວງ, ອົງການ ແລະ ທ້ອງຖິ່ນຕ່າງໆ ກ່ຽວກັບວຽກງານບໍລິຫານ-ພິທີການ ຈັດລະຈອນເອກະສານຕ່າງໆ;



สแกนด้วย CamScanner

6. ຕິດຕາມ, ກວດກາການປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ, ແຜນການ, ແຜນງານ, ໂຄງການ, ສິດ ແລະ ໜ້າທີ່, ຄວາມຮັບຜິດຊອບ ຂອງການຈັດຕັ້ງ, ຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ, ຫົວໜ້າ ແລະຮອງຫົວໜ້າພະແນກ, ພະນັກງານ-ລັດຖະກອນ ພາຍໃນຫ້ອງການຂອງຕົນ;
7. ຄົ້ນຄ້ວາ, ພິຈາລະນາຄໍາຮ້ອງ-ຄໍາສະເໜີ ຂອງພະນັກງານ-ລັດຖະກອນ ຢູ່ໃນຄວາມຮັບຜິດຊອບຂອງຫ້ອງການຕົນ ກ່ຽວກັບການກະທໍາ ຫຼື ຕົກລົງບັນຫາໃດໜຶ່ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ເພື່ອສະເໜີຂັ້ນເທິງຂອງຕົນແກ້ໄຂ;
8. ສະຫຼຸບສັງລວມ, ລາຍງານການເຄື່ອນໄຫວວຽກງານກວດກາລັດ ແລະ ຜົນຂອງການກວດກາ ໃນຂອບເຂດຮັບຜິດຊອບຂອງຕົນ ໃຫ້ຫົວໜ້າຫ້ອງການຂອງຕົນ ແລະ ຫົວໜ້າກົມກວດກາ ກະຊວງ ຢ່າງເປັນປົກກະຕິ;
9. ປະຕິບັດວຽກງານອື່ນໆ ຕາມການມອບໝາຍ ຂອງຫົວໜ້າຫ້ອງການຄະນະກໍາມະການຮ່ວມມື ລາວ-ຫວຽດນາມ.

**ມາດຕາ 8: ໜ້າທີ່ຂອງພະແນກຮ່ວມມືດ້ານການເມືອງ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.**

1. ປະສານສົມທົບຕິດຕາມ, ເກັບກໍາຂໍ້ມູນ ເພື່ອຄົ້ນຄ້ວາກົນໄກນະໂຍບາຍການຮ່ວມມືຂົງເຂດການເມືອງ, ການຕ່າງປະເທດ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະກອບດ້ວຍບັນດາຂະແໜງ: ການຕ່າງ ປະເທດ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄະນະພົວພັນຕ່າງປະເທດສູນກາງພັກ, ສະພາແຫ່ງຊາດ, ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ຫ້ອງວ່າການສໍານັກງານປະທານປະເທດ, ສະຫະພັນນັກຮົບເກົ່າ ແລະ ບັນດາອົງການຂອງພັກ, ອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ ເພື່ອສະຫຼຸບສັງລວມລາຍງານຂັ້ນເທິງຕົນ ຮັບຊາບຢ່າງເປັນປົກກະຕິ;
2. ລົງເລິກຕິດຕາມນັບແຕ່ທ້ອງທີ່ ເພື່ອຊຸກຍູ້, ສະຫຼຸບສັງລວມ, ລາຍງານສະພາບການພົວພັນຮ່ວມມື ແລະ ການຊ່ວຍເຫຼືອ ດ້ານຍຸດທະສາດໃນຂົງເຂດການເມືອງ, ການຕ່າງປະເທດ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ລະຫວ່າງ ລັດຖະບານສອງປະເທດ ລາວ-ຫວຽດນາມ ນັບແຕ່ສູນກາງຮອດທ້ອງຖິ່ນຕ່າງໆ ເພື່ອລາຍງານໃຫ້ຂັ້ນເທິງຊາບ ແລະ ມີທິດຊີ້ນໍາ ໃນແຕ່ລະໄລຍະ;
3. ຕິດຕາມສະພາບການເຄື່ອນໄຫວ, ກົນໄກນະໂຍບາຍດ້ານຍຸດທະສາດ, ການເມືອງ, ການຕ່າງປະເທດ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງ ສສ ຫວຽດນາມ ເພື່ອສັງລວມລາຍງານໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ;
4. ປະສານສົມທົບກັບບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນຕ່າງໆ ເພື່ອຄົ້ນຄ້ວາກົນໄກນະໂຍບາຍການຮ່ວມມື ໃນດ້ານຕ່າງໆທີ່ກ່ຽວຂ້ອງ ກັບ ສສ ຫວຽດນາມ ຢ່າງມີປະສິດທິຜົນ;
5. ຄົ້ນຄ້ວາກະກຽມບັນດາເນື້ອໃນທີ່ກ່ຽວຂ້ອງກັບວຽກງານດ້ານການເມືອງ, ການຕ່າງປະເທດ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອປະກອບໃສ່ເນື້ອໃນເອກະສານສັນຍາ, ອະນຸສັນຍາ, ບົດບັນທຶກກອງປະຊຸມ, ຂໍ້ຕົກລົງຕ່າງໆ ທີ່ບັນດາກະຊວງ, ຂະແໜງການກ່ຽວຂ້ອງ ກໍ່ຄືລັດຖະບານສອງປະເທດຈະພິຈາລະນາລົງນາມຮ່ວມກັນ;
6. ພົວພັນ, ປະສານສົມທົບກັບ ບັນດາພະແນກການ ພາຍໃນຫ້ອງການຄະນະກໍາມະການຮ່ວມມື ລາວ-ຫວຽດນາມ ແລະ ບັນດາກົມທີ່ກ່ຽວຂ້ອງໃນກະຊວງແຜນການ ແລະ ການລົງທຶນ;
7. ປະຕິບັດວຽກງານອື່ນໆ ຕາມການມອບໝາຍ ຂອງ ຄະນະຫ້ອງການຄະນະກໍາມະການຮ່ວມມືລາວ-ຫວຽດນາມ.



สแกนด้วย CamScanner

**ມາດຕາ 9: ໜ້າທີ່ຂອງພະແນກຮ່ວມມືດ້ານເສດຖະກິດ ແລະ ການລົງທຶນ.**

1. ປະສານສົມທົບຕິດຕາມ, ເກັບກຳຂໍ້ມູນ ເພື່ອຄົ້ນຄ້ວາກົນໄກນະໂຍບາຍການຮ່ວມມືກ່ຽວກັບຂົງເຂດເສດຖະກິດ ແລະການລົງທຶນ ປະກອບດ້ວຍບັນດາຂະແໜງ: ແຜນການ-ການລົງທຶນ, ກະສິກຳ-ປ່າໄມ້, ອຸດສາຫະກຳ-ການຄ້າ, ພະລັງງານ-ບໍ່ແຮ່, ໂຍທາທິການ-ຂົນສົ່ງ, ການເງິນ, ທະນາຄານ, ຊັບພະຍາກອນ ທຳມະຊາດ-ສິ່ງແວດລ້ອມ, ສະພາການຄ້າ-ອຸດສາຫະກຳແຫ່ງຊາດ;
2. ສະຫຼຸບສັງລວມສະພາບການລົງທຶນ ຂອງບັນດາຫົວໜ່ວຍທຸລະກິດຫວຽດນາມ ທີ່ມາລົງທຶນ ຢູ່ ສປປ ລາວ ແລະ ບັນດາຫົວໜ່ວຍທຸລະກິດລາວ ທີ່ໄປລົງທຶນ ຢູ່ ສສ ຫວຽດນາມ ໃນຂົງເຂດຕ່າງໆ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ ເພື່ອລາຍງານໃຫ້ຂັ້ນເທິງຊາບ ແລະ ມີທິດຊີ້ນຳ ໃນແຕ່ລະໄລຍະ;
3. ລົງເລິກຕິດຕາມນັບແຕ່ຫົວທີ ເພື່ອປະສານສົມທົບກັບບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນຕ່າງໆ ເພື່ອຄົ້ນຄ້ວາກົນໄກນະໂຍບາຍການຮ່ວມມື ແລະ ລົງທຶນ ໃນຂົງເຂດເສດຖະກິດ ກັບ ສສ ຫວຽດນາມ ຢ່າງມີປະສິດທິຜົນ;
4. ປະສານສົມທົບກັບກົມສົ່ງເສີມການລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການຈັດຕັ້ງປະຕິບັດໂຄງການລົງທຶນ ຂອງ ຫວຽດນາມ ຢູ່ ສປປ ລາວ ປະຈຳເດືອນ , ປະຈຳໄຕມາດ, ປະຈຳ 06 ເດືອນ ແລະ ປະຈຳປີ;
5. ເຂົ້າຮ່ວມຕິດຕາມ ຮ່ວມກັບພາກສ່ວນກ່ຽວຂ້ອງໃນການແກ້ໄຂບັນຫາທີ່ເກີດຂຶ້ນໃນການດຳເນີນກິດຈະການໂຄງການຮ່ວມມື-ລົງທຶນ ຂອງ ຫວຽດນາມ ຢູ່ ສປປ ລາວ ບົນພື້ນຖານລະບຽບກົດໝາຍ ແລະ ບົນຈິດໃຈຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ໂດຍຕ່າງຝ່າຍຕ່າງມີຜົນປະໂຫຍດ;
6. ຄົ້ນຄ້ວາກະກຽມບັນດາເນື້ອໃນເອກະສານສັນຍາ, ອະນຸສັນຍາ, ບົດບັນທຶກກອງປະຊຸມ, ຂໍ້ຕົກລົງຕ່າງໆກ່ຽວກັບການລົງທຶນ ທີ່ ລັດຖະບານສອງປະເທດ ຈະພິຈາລະນາລົງນາມຮ່ວມກັນ;
7. ຕິດຕາມ, ຄົ້ນຄ້ວາ ແລະ ສັງລວມສະພາບການພັດທະນາເສດຖະກິດສັງຄົມ ຂອງ ຫວຽດນາມ ແລະ ອື່ນໆ ໃນແຕ່ລະໄລຍະ;
8. ປະສານສົມທົບກັບ ທີ່ປຶກສາດ້ານເສດຖະກິດ, ການຄ້າ ສະຖານທູດຫວຽດນາມ ປະຈຳລາວ, ທີ່ປຶກສາດ້ານການຄ້າ ສະຖານທູດລາວ-ກົງສູນລາວ ປະຈຳ ຢູ່ ສສ ຫວຽດນາມ, ບັນດາກະຊວງ, ອົງການທຽບເທົ່າ ແລະ ບັນດາແຂວງ ຕາມການມອບໝາຍຂອງຂັ້ນເທິງ ແລະ ປະຕິບັດການລາຍງານຢ່າງເປັນປະຈຳ;
9. ພົວພັນປະສານສົມທົບ ກັບບັນດາພະແນກການພາຍໃນຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ແລະ ບັນດາກົມທີ່ກ່ຽວຂ້ອງໃນກະຊວງແຜນການ ແລະ ການລົງທຶນ;
10. ປະຕິບັດວຽກງານອື່ນໆ ຕາມການມອບໝາຍ ຂອງຄະນະຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ.

**ມາດຕາ 10: ໜ້າທີ່ຂອງພະແນກຮ່ວມມືດ້ານການສຶກສາ ແລະ ວັດທະນະທຳ-ສັງຄົມ.**

1. ປະສານສົມທົບຕິດຕາມ, ເກັບກຳຂໍ້ມູນ ເພື່ອຄົ້ນຄ້ວາກົນໄກນະໂຍບາຍການຮ່ວມມືໃນຂົງເຂດສຶກສາ- ວັດທະນະທຳ ແລະ ສັງຄົມ ປະກອບດ້ວຍບັນດາຂະແໜງ: ສຶກສາທິການ-ກິລາ, ສາທາລະນະສຸກ, ແຮງງານ-ສະຫວັດດີການສັງຄົມ, ຖະແຫຼງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວ, ເຕັກໂນໂລຊີ-ການສື່ສານ, ພາຍໃນ, ຍຸຕິທຳ, ສານ, ໄອຍະການ, ອົງການກວດສອບແຫ່ງລັດ, ສະຖາບັນການເມືອງ-



สแกนด้วย CamScanner

ການປົກຄອງແຫ່ງຊາດ, ສະຖາບັນວິທະຍາສາດເສດຖະກິດ-ສັງຄົມ ເພື່ອສະຫຼຸບສັງລວມລາຍງານຂັ້ນເທິງຕົນຮັບຊາບ;

2. ລົງເລິກຕິດຕາມນັບແຕ່ຫົວທີ ເພື່ອຕິດຕາມ, ຊຸກຍູ້, ສະຫລຸບສັງລວມ, ລາຍງານສະພາບການຮ່ວມມື ແລະ ການຊ່ວຍເຫຼືອ ໃນຂົງເຂດສຶກສາ-ວັດທະນະທຳ ແລະ ສັງຄົມ ລະຫວ່າງ ສອງປະເທດ ລາວ-ຫວຽດນາມ ນັບແຕ່ສູນກາງຮອດທ້ອງຖິ່ນຕ່າງໆ ເພື່ອລາຍງານໃຫ້ຂັ້ນເທິງຊາບ ແລະ ມີທິດຊີ້ນຳ ຢ່າງເປັນປົກກະຕິ;
3. ປະສານສົມທົບກັບບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນຕ່າງໆ ເພື່ອຄົ້ນຄ້ວາກົນໄກນະໂຍບາຍການຮ່ວມມື ໃນດ້ານຕ່າງໆທີ່ກ່ຽວຂ້ອງ ກັບ ສສ ຫວຽດນາມ ຢ່າງມີປະສິດທິຜົນ;
4. ຄົ້ນຄ້ວາກະກຽມບັນດາເນື້ອໃນເອກະສານສັນຍາ, ອະນຸສັນຍາ, ບົດບັນທຶກກອງປະຊຸມ, ຂໍ້ຕົກລົງຕ່າງໆກ່ຽວກັບຂົງເຂດສຶກສາ-ວັດທະນະທຳ ແລະສັງຄົມ ທີ່ລັດຖະບານສອງປະເທດຈະພິຈາລະນາລົງນາມຮ່ວມກັນ;
5. ຕິດຕາມ, ເກັບກຳສະພາບການເຄື່ອນໄຫວ, ກົນໄກນະໂຍບາຍດ້ານສຶກສາ-ວັດທະນະທຳ ແລະ ສັງຄົມ ຂອງ ສສ ຫວຽດນາມ ເພື່ອສັງລວມລາຍງານໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ;
6. ປະສານສົມທົບກັບ ທີ່ປຶກສາດ້ານສຶກສາ, ວັດທະນະທຳ ສະຖານທູດຫວຽດນາມ ປະຈຳລາວ, ທີ່ປຶກສາດ້ານສຶກສາ, ວັດທະນະທຳ ສະຖານທູດລາວ-ກົງສູນລາວ ປະຈຳ ສສ ຫວຽດນາມ, ບັນດາກະຊວງ, ອົງການທຽບເທົ່າ ແລະບັນດາແຂວງ ຕາມການມອບໝາຍຂອງຂັ້ນເທິງ ແລະ ປະຕິບັດການລາຍງານຢ່າງເປັນປະຈຳ;
7. ພົວພັນ, ປະສານສົມທົບກັບ ບັນດາພະແນກການພາຍໃນຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ແລະ ບັນດາກົມທີ່ກ່ຽວຂ້ອງໃນກະຊວງແຜນການ ແລະ ການລົງທຶນ;
8. ປະຕິບັດວຽກງານອື່ນໆ ຕາມການມອບໝາຍ ຂອງຄະນະຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ.

## ໝວດທີ V
## ຫຼັກການ ແລະ ລະບອບແບບແຜນວິທີເຮັດວຽກ

### ມາດຕາ 11: ຫຼັກການ

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ສົມທົບກັບ ການປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ, ການມອບສິດ ແລະຄວາມຮັບຜິດຊອບຕ້ອງມີລາຍລັກອັກສອນເປັນທາງການ;
2. ທຸກການເຄື່ອນໄຫວວຽກງານແມ່ນອີງໃສ່ແນວທາງຂອງພັກ, ລະບຽບກົດໝາຍຂອງລັດ, ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ, ແຜນການປະຈຳປີ, ແຜນ 5 ປີ ຂອງກະຊວງ, ອົງການທຽບເທົ່າກະຊວງ ມາຈັດຕັ້ງຜັນຂະຫຍາຍ ແລະປະຕິບັດຕົວຈິງໃຫ້ໄດ້ຮັບຜົນດີ.



สแกนด้วย CamScanner

**ມາດຕາ 12: ແບບແຜນວິທີການເຮັດວຽກ.**

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ; ປະສານສົມທົບຢ່າງແໜ້ນແຟ້ນ ກັບບັນດາກົມ, ທຽບເທົ່າກົມ ແລະ ການຈັດຕັ້ງຕ່າງໆຂອງບັນດາກະຊວງ, ຂະແໜງການ, ອົງການ ແລະ ທ້ອງຖິ່ນຕ່າງໆທີ່ກ່ຽວຂ້ອງ ເພື່ອແນໃສ່ການພັດທະນາວຽກງານຂອງຕົນໃຫ້ເຂັ້ມແຂງ;
2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້ຜົນເສຍ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, ປະຈຳໄຕມາດ, 6 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານໃຫ້ຂັ້ນເທິງຕົນ ລວມທັງ ສູນກາງພັກ ແລະ ລັດຖະບານ ຊາບເປັນປົກກະຕິ;
4. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກໃຫ້ສອດຄ່ອງກັບລະບຽບການ;
5. ກົນໄກການປະສານງານກ່ຽວກັບວຽກງານຮ່ວມມື ລາວ-ຫວຽດນາມ ຢູ່ທ້ອງຖິ່ນຕ່າງໆ ແມ່ນຂຶ້ນກັບພະແນກແຜນການ ແລະ ການລົງທຶນ ຂອງນະຄອນຫຼວງວຽງຈັນ ແລະແຕ່ລະແຂວງໃນຂອບເຂດທົ່ວປະເທດ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 13: ງົບປະມານ ແລະ ກາປະທັບ**

ຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ເປັນຫົວໜ່ວຍງົບປະມານການເງິນຂັ້ນສອງ ແລະ ມີກາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 14: ການຈັດຕັ້ງປະຕິບັດ**

ຫ້ອງການຄະນະກຳມະການຮ່ວມມື ລາວ-ຫວຽດນາມ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 15: ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ສະບັບເລກທີ 2710/ກຜທ, ລົງວັນທີ 09 ພະຈິກ 2017 ແລະມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

ລັດຖະມົນຕີ

ຄຳເຈນ ວົງໂພສີ



สแกนด้วย CamScanner